ໂຄງການເຄືອຂ່າຍຂໍ້ມູນທີ່ດິນ
ແລະ ຊັບພະຍາກອນທຳມະຊາດ

Rights-LINK

# ບັນຫາປາຕາຍຢູ່ໜອງຫານ



ໜອງຫານຕັ້ງຢູ່ເຂດບ້ານນາຫານ ເມືອງປາກງື່ມ, ນະຄອນຫລວງວຽງຈັນ

ເຫດການນີ້ເກີດຂຶ້ນໃນເດືອນພຶດສະພາ ປີ 2009

ຂຽນໂດຍ: ທ່ານ ອຸ່ນແກ້ວ ສຸກສະຫວັນ

*ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.*

http://www.rightslinklao.org

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC

VILLAGE FOCUS INTERNATIONAL

ໂຄງການ ເຄືອຂ່າຍຂໍ້ມູນ ທີ່ດິນ

# Rights-LINK

ບ້ານ ໂພນສະຫວັນໃຕ້, ໜ່ວຍ 14, ເຮືອນເລກທີ 207
ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 (0)21 312519
ແຟກ: +856 (0)21 315841

ອົງການບ້ານຈຸດສຸມສາກົນ (VFI)

ອົງການຄຸ້ມຄອງທີ່ດິນແຫ່ງຊາດ (NLMA)

ສະໜັບສະໜູນທຶນໂດຍ: ອົງການເພື່ອການພັດທະນາ ແລະ ການຮ່ວມມື
ແຫ່ງປະເທດສະວິດເຊີແລນ (SDC)

# ບົດນຳ

ປັດຈຸບັນຈຳນວນໂຮງຈັກໂຮງງານນັບມື້ນັບຫລາຍຂຶ້ນ ເຊິ່ງກາຍເປັນຕົວຂັບເຄື່ອນລະບົບເສດຖະກິດໃນການຂະຫຍາຍຕົວ, ແຕ່ຖ້າເບິ່ງອີກດ້ານໜຶ່ງກໍຄືມີໂຮງຈັກໂຮງງານຈຳນວນໜຶ່ງຍັງບໍ່ເຂັ້ມງວດໃນການຄຸ້ມຄອງສິ່ງເສດເຫລືອທີ່ຖ່າຍເທອອກຈາກໂຮງງານ. ໃນນັ້ນ, ໂຮງງານຜະລິດແປ້ງມັນຕົ້ນກໍເປັນໂຮງງານໜຶ່ງທີ່ໄດ້ຮັບອະນຸຍາດຈາກລັດຖະບານໃຫ້ມາຕັ້ງຢູ່ເຂດບ້ານນາທາມ, ເມືອງປາກງື່ມ, ນະຄອນຫລວງວຽງຈັນ ເພື່ອຜະລິດແປ້ງມັນຕົ້ນສົ່ງອອກ. ແຕ່ບັນຫາມີຢູ່ວ່າ ເມື່ອໂຮງງານນີ້ໄດ້ດຳເນີນໄປໄລຍະໜຶ່ງກໍໄດ້ສ້າງຜົນກະທົບຕໍ່ສິ່ງແວດລ້ອມ.

ບໍ່ວ່າໂຮງຈັກໂຮງງານໃດກໍຕາມ, ຖ້າວ່າ ບໍ່ມີການຄຸ້ມຄອງລະບົບນ້ຳເສຍກໍຈະສົ່ງຜົນກະທົບທີ່ບໍ່ດີຕໍ່ສິ່ງແວດລ້ອມ ແລະ ຄົນຢ່າງຫລີກລ້ຽງບໍ່ໄດ້. ກໍລະນີໂຮງງານແປ້ງມັນຕົ້ນອິນໂດຈີນປ່ອຍນ້ຳເສຍລົງໃສ່ໜອງທານຊຶ່ງເປັນບ່ອນທຳມາຫາກິນຂອງປະຊາຊົນຊາວບ້ານນາທາມຫລາຍຮ້ອຍຄອບຄົວທີ່ດຳລົງຊີວິດດ້ວຍການຫາປານັ້ນ, ເປັນຍ້ອນລະບົບການເກັບຮັກສານ້ຳເສຍບໍ່ໄດ້ມາດຕະຖານ.

ບັນຫານີ້ສະທ້ອນໃຫ້ເຫັນຊ່ອງຫວ່າງການອະນຸມັດໃຫ້ສ້າງຕັ້ງໂຮງງານຍັງບໍ່ທັນຮັດກຸມກ່ອນທີ່ຈະອະນຸຍາດໃຫ້ດຳເນີນການຜະລິດ, ບົ່ງບອກເຖິງການປະຕິບັດກວດກາທາງດ້ານສິ່ງແວດລ້ອມຍັງມີ ຂໍ້ຈຳກັດບໍ່ທັນເວລາແລະຂາດການປະສານງານກັບສື່ມວນຊົນ.ໜ່ວຍງານກົມອາຫານ ແລະຢາຍັງຂາດຄວາມເປັນເອກະພາບກັນໃນການຕິດຕາມກວດກາຄຸນນະພາບຂອງນ້ຳຫລັງຈາກທີ່ຮູ້ວ່າ ປາໃນໜອງທານຕາຍຍ້ອນສານພິດທີ່ປະປົນກັບນ້ຳເສຍທີ່ໂຮງງານປ່ອຍລົງມາ. ປະຊາຊົນເອງບໍ່ມີທີ່ເພິ່ງໄດ້ຫລັງຈາກເກີດບັນຫານດັ່ງກ່າວ, ສ່ວນໃຫຍ່ແມ່ນຊ່ວຍເຫລືອຕົນເອງ.

ກໍລະນີສຶກສານີ້ຈະນຳສະເໜີກ່ຽວກັບບັນຫາປາຕາຍຢູ່ ໜອງທານ ເຂດບ້ານນາທາມ, ເມືອງປາກງື່ມ, ນະຄອນຫລວງວຽງຈັນ ທີ່ສົ່ງຜົນກະທົບຕໍ່ການທຳມາຫາກິນຂອງປະຊາຊົນ ແລະ ບັນຫາກ່ຽວກັບຂອດການປະສານງານຂອງພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດ ກາບັນຫາດັ່ງກ່າວ.

# ສາລະບານ


ບົດນຳ. I
ສາລະບານ. III

ຄວາມເປັນມາ. 1
ບັນຫາທີ່ເກີດຂຶ້ນຢູ່ເຂດໜອງຫານ. 1
ກ່ຽວກັບລະບຽບກົດໝາຍທາງດ້ານສິ່ງແວດລ້ອມ. 3
ການແກ້ໄຂບັນຫາຂອງໜ່ວຍງານສິ່ງແວດລ້ອມ. 3
ການຊົດເຊີຍ ແລະ ມາດຕະການແກ້ໄຂຂອງໂຮງງານ. 5
ການວິເຄາະບັນຫາ ແລະ ສິ່ງທີ່ອາດຈະເກີດຂຶ້ນ. 7
ສະຫລຸບ. 8
ຂໍ້ສະເໜີ. 8
ແຫລ່ງຂໍ້ມູນອ້າງອີງ. 9

## 1. ຄວາມເປັນມາ:

ໃນວັນທີ 18 ພຶດສະພາ 2010, ຊາວບ້ານນາຫານທີ່ຫາປາກິນຢູ່ໜອງຫານພາກັນຕົກຕະລຶງ ເມື່ອເຫັນປາຢູ່ໃນໜອງຫານຕາຍເປັນຈຳນວນຫລວງຫລາຍ.

ໜອງຫານເປັນໜອງຂະໜາດໃຫຍ່ມີເນື້ອທີ່ 210 ເຮັກຕາ ໃນນັ້ນມີເຂດອະນຸລັກສັດນ້ຳ 6 ເຮັກຕາ. ຕັ້ງຢູ່ເຂດບ້ານນາຫານ ແລະ ບ້ານນາຊອນ, ເມືອງປາກງື່ມ, ນະຄອນຫລວງວຽງຈັນ. ປະຊາຊົນສ່ວນຫລາຍທຳມາຫາກິນດ້ວຍການເຮັດນາ ແລະ ຫາປາຈາກໜອງດັ່ງກ່າວນີ້.

ໃນເບື້ອງຕົ້ນຊາວບ້ານຍັງບໍ່ທັນຮູ້ຈັກສາເຫດຢ່າງຊັດເຈນວ່າ ເປັນຫຍັງປາໃນໜອງຈຶ່ງຕາຍ. ຕໍ່ມາຈຶ່ງຮູ້ວ່າມີໂຮງງານແປ້ງມັນຕົ້ນອິນໂດຊາຍນາ ຕັ້ງຢູ່ຫ່າງຈາກໜອງຫານຂຶ້ນໄປປະມານ 4 ກິໂລແມັດ ໄດ້ປ່ອຍນ້ຳເສຍລົງໃສ່ໜອງນີ້. ເນື່ອງຈາກວ່າ ໂຮງງານມີແຕ່ບໍ່ຂັງນ້ຳເສຍ, ແຕ່ບໍ່ມີລະບົບບຳບັດນ້ຳເສຍ ເມື່ອຮອດລະດູຝົນມີນ້ຳອັ່ງຫລາຍຂຶ້ນ. ບໍ່ຂັງນ້ຳເສຍບໍ່ສາມາດຮອງຮັບປະລິມານນ້ຳເສຍທັງໝົດໄດ້ ຈຶ່ງປ່ອຍ ໃຫ້ໄຫລລົງມາໃສ່ໜອງຫານ.

ໂຮງງານຜະລິດແປ້ງມັນຕົ້ນ ອິນໂດຊາຍນາ ໄດ້ສ້າງຕັ້ງຂຶ້ນໃນປີ 2008 ແລະ ເລີ່ມຜະລິດໃນຕົ້ນປີ 2009. ໃນເດືອນພຶດສະພາ ເຊິ່ງເປັນຕົ້ນລະດູຝົນ, ໄລຍະນັ້ນຝົນຕົກໜັກເຮັດໃຫ້ນ້ຳໃນໜອງມີຫລາຍຂຶ້ນ ແລະ ໂຮງງານດັ່ງກ່າວກໍເລີ່ມປ່ອຍນ້ຳເສຍອອກມາສູ່ໜອງ. ນ້ຳຢູ່ໃນໜອງນີ້ຈະໄຫລລົງສູ່ນ້ຳງື່ມ ແລະແມ່ນ້ຳຂອງອີກຕໍ່ໜຶ່ງເຊິ່ງເປັນແມ່ນ້ຳສາຍໃຫຍ່ເປັນບ່ອນທີ່ປະຊາຊົນໃນເຂດດັ່ງກ່າວລົງຫາປາ ແລະ ເອົານ້ຳຂຶ້ນມາອຸປະໂພກ ແລະ ບໍລິໂພກ.

ຕໍ່ມາທາງເຈົ້າຂອງໂຮງງານກໍອອກມາຍອມຮັບວ່າ ໂຮງງານໄດ້ປ່ອຍນ້ຳເສຍລົງໜອງຫານແທ້ ຈົນເຮັດໃຫ້ປາຕາຍເປັນຈຳນວນຫລວງຫລາຍພາຍມາກ.

## 2. ບັນຫາທີ່ເກີດຂຶ້ນຢູ່ເຂດໜອງຫານ.

ຫລັງຈາກທີ່ໂຮງງານປ່ອຍນ້ຳເສຍລົງໃສ່ ໜອງຫານ ເປັນເຫດໃຫ້ປາຕາຍເປັນຈຳນວນຫລາຍຮ້ອຍໂຕນ. ທາງອຳນາດການປົກຄອງຈຶ່ງຕິດຕໍ່ຫານັກຂ່າວ, ເພື່ອມາເກັບກຳຂ່າວເລື່ອງປາຕາຍ ຈົນໃນທີ່ສຸດທາງໂຮງງານຕ້ອງອອກມາຍອມຮັບເອງ.

ຊາວບ້ານບໍ່ມີໃຜກ້າລົງໄປຫາປາຢູ່ໜອງຫານມາກິນ. ເພາະຢ້ານຈະເປັນອັນຕະລາຍຕໍ່ສຸຂະພາບຂອງຕົນເອງ, ປາຈຳນວນຫລາຍຕາຍເດຍລະດາດຟູຢູ່ເທິງໜ້ານ້ຳມີຄວາມຍາວປະມານ 2 ກິໂລແມັດໄຫລລົງສູ່ນ້ຳງື່ມ.

ແຕ່ໜ່ວຍງານທີ່ເຮັດວຽກກ່ຽວກັບສິ່ງແວດລ້ອມຊ້ຳພັດເຮັດວຽກຊັກຊ້າ, ກິນເວລາຫລາຍມື້. ນັບແຕ່ມື້ປາຕາຍໃນວັນທີ 18 ພຶດສະພາ ຈົນມາເຖິງວັນທີ 16 ມິຖຸນາ ເຊິ່ງລວມແລ້ວເປັນເວລາປະມານ 28 ມື້ ຜົນກວດຕົວຢ່າງນ້ຳຈຶ່ງອອກມາ. ຜົນປະກົດວ່າ ຢູ່ໃນຕົວຢ່າງຂອງນ້ຳພົບທາດ TSS ເຊິ່ງເປັນທາດແຂງທີ່ບໍ່ສາມາດລະລາຍໃນນ້ຳສູງກວ່າມາດຕະຖານ, ພົບທາດ Oil ແລະ Grease ເຊິ່ງເປັນທາດນ້ຳມັນໃນນ້ຳ ແລະ ສານໄຊຍາໄນ (Cyanide) NC ເຊິ່ງເປັນສາເຫດສຳຄັນທີ່ເຮັດໃຫ້ປາຕາຍ. ນັກວິໄຈຈາກສູນວິໄຈນ້ຳປະປາຈີ່ນາຍໂມ້ໄດ້ອອກມາຢັ້ງຢືນກັບໜັງສືພິມລາວພັດທະນາໃນວັນ 12/6/2009 ວ່າໄດ້ພົບທາດ BOD ໃນນ້ຳໜອງຫານສູງເກີນມາດຕະຖານ 10 ເທົ່າໂຕ. ຕາມປົກກະຕິແລ້ວ, ສານດັ່ງກ່າວຈະມີຢູ່ໃນນ້ຳປະມານ 30 ມິນລີກຼາມຕໍ່ນ້ຳໜຶ່ງລິດ. ແຕ່ວ່າ ຈາກຕົວຢ່າງນ້ຳຢູ່ໜອງຫານພົບວ່າ ມີສານ BOD ເຖິງ 300 ມິນລີກຼາມ. ນອກຈາກນີ້ກໍຍັງພົບທາດຊັນຟາຍ ແລະ ທາດອາໂມເນຍເກີນມາດຕະຖານເຊັ່ນດຽວກັນ.



ທ່ານ ນາງ ທອງພູນ ເທິງພະຈັນ ນັກວິຊາການກວດກາພະຍາດສັດນ້ຳ ກົມລ້ຽງສັດ ແລະ ການປະມົງ ໄດ້ກ່າວຢູ່ໃນໜັງສືພິມລາວພັດທະນາໃນວັນດຽວກັນວ່າ "ຫລັງຈາກທີ່ວິໄຈເບິ່ງປາແລ້ວພົບວ່າສະພາບເນື້ອປາຍັງມີຄວາມສົມບູນແລະຍັງສົດຢູ່ ແຕ່ວ່າຕັບຂອງປາມີສີດຳເຄືອບ ໄປທົ່ວ ແລະ ໝາກໄຂ່ຫລັງຂອງປາຈະໄຄ່ບວມ".

ສຳລັບຜົນວິໄຈສານເຄມີທີ່ເຈືອປົນຢູ່ໃນນ້ຳເຫັນວ່າ ມີການປົນເປື້ອນຂອງສານໄຊຍາໄນເຊິ່ງມີຢູ່ໃນເປືອກມັນຕົ້ນໂດຍທຳມະຊາດ. ຕາມການປະເມີນທາງດ້ານວິຊາການຂອງອົງການຊັບພະຍາກອນນ້ຳ ແລະສິ່ງແວດລ້ອມເຫັນວ່າ ສານໄຊຍາໄນອາດຈະລົ້ນເກີນຂະໜາດໃນເວລາທີ່ປ່ອຍນ້ຳເສຍລົງໃນໜອງນ້ຳ.

ແນວໃດກໍຕາມ, ເຖິງຈະເອົາຕົວຢ່າງຂອງນ້ຳໄປກວດ. ແຕ່ຜົນດັ່ງກ່າວກໍຍັງບໍ່ໄດ້ສ້າງຄວາມໝັ້ນໃຈໃຫ້ກັບປະຊາຊົນບ້ານດັ່ງກ່າວໄດ້ເລີຍ, ເພາະບໍ່ຮູ້ວ່າ ຍາມໃດເຂົາເຈົ້າຈະສາມາດລົງຫາປາໃນໜອງນັ້ນໄດ້ ແລະ ກໍຍັງບໍ່ມີໃຜສາມາດໃຫ້ຄຳຕອບແກ່ຊາວບ້ານໄດ້.

## 3. ກ່ຽວກັບລະບຽບກົດໝາຍທາງດ້ານສິ່ງແວດລ້ອມ.

ບໍລິສັດບໍ່ປະຕິບັດຕາມກົດໝາຍສິ່ງແວດລ້ອມຢ່າງເຄັ່ງຄັດ. ໃນມາດຕາ 23 ວ່າດ້ວຍມາດຕະການປ້ອງກັນ ແລະ ຄວບຄຸມມົນລະພິດວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມເຊິ່ງ:

ໃນວັກທີ 2 ລະບຸໄວ້ວ່າ: "ບຸກຄົນຫລືການຈັດຕັ້ງຕ່າງໆ ຕ້ອງຮັບປະກັນການປ້ອງກັນ ແລະ ຄວບຄຸມມົນລະພິດທາງນ້ຳ, ດິນ, ອາກາດ, ສິ່ງເສດເຫລືອ, ສານເຄມີທີ່ເປັນພິດ, ທາດກຳມັນຕະພາບລັງສີ, ຄວາມສັ່ນສະເທືອນ, ສຽງ, ແສງ, ສີ, ແລະ ກິ່ນຢ່າງເຂັ້ມງວດ"

ໃນວັກທີ 3 ລະບຸໄວ້ວ່າ: "ການຖອກເທ, ລະບາຍນ້ຳເປື້ອນ, ນ້ຳເສຍຄຸນນະພາບທີ່ເກີນມາດຕະຖານຄຸນນະພາບນ້ຳທີ່ໄດ້ກຳນົດໄວ້ແບບຊະຊາຍ ໂດຍບໍ່ໄດ້ມີການບຳບັດກ່ອນລົງໃສ່ຕະຄອງຮ່ອງນ້ຳ, ແຫລ່ງນ້ຳທຳມະຊາດຫລືບ່ອນອື່ນໆ"

ມາດຕາ 25: ພັນທະການໃນການແກ້ໄຂບັນຫາສິ່ງແວດລ້ອມ

ວັກທີ 1 ໄດ້ລະບຸໄວ້ວ່າ: "ບຸກຄົນແລະການຈັດຕັ້ງຕ້ອງເປັນເຈົ້າການເຂົ້າຮ່ວມໃນການແກ້ໄຂບັນຫາສິ່ງແວດລ້ອມ".

ວັກທີ 2 ໄດ້ລະບຸໄວ້ວ່າ: "ພົນລະເມືອງທຸກຄົນ ຫລື ການຈັດຕັ້ງມີສິດສະເໜີ ຫລື ຮຽກຮ້ອງຟ້ອງຕໍ່ການກະທຳໃດໜຶ່ງທີ່ກໍ່ໃຫ້ເກີດຜົນສະທ້ອນອັນບໍ່ດີຕໍ່ສິ່ງແວດລ້ອມ, ສ້າງຄວາມເສຍຫາຍຕໍ່ສຸຂະພາບ, ຊີວິດຂອງຄົນ, ສັດພືດແລະສິ່ງແວດລ້ອມ".

## 4. ການແກ້ໄຂບັນຫາຂອງໜ່ວຍງານສິ່ງແວດລ້ອມ:

ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມໄດ້ນຳເອົາຕົວຢ່າງນ້ຳຢູ່ໃນໜອງໄປກວດເພື່ອວິໄຈວ່າມີສິ່ງປົນເປື້ອນຫຍັງຢູ່ໃນນ້ຳ ແຕ່ວ່າຜົນກວດໃຊ້ເວລາປະມານ 2 ອາທິດ ຈຶ່ງຮູ້ຜົນ.

ໃນໄລຍະເວລາທີ່ມີການກວດກາຕົວຢ່າງນ້ຳແລະປາ ທາງເຈົ້າໜ້າທີ່ໄດ້ປະກາດຫ້າມປະຊາຊົນບໍ່ໃຫ້ລົງຫາປາຢູ່ໃນໜອງມາກິນ ເພາະຢ້ານວ່າຈະເປັນອັນຕະລາຍຕໍ່ສຸຂະພາບ ແລະ ຊີວິດຂອງພວກເຂົາ.



ຕາມປົກກະຕິແລ້ວຢູ່ໃນນ້ຳເສຍຕ້ອງມີສານປົນເປື້ອນບໍ່ເກີນ 0.1 ມິນລິກຼາມ (mg) ຕໍ່ໜຶ່ງລິດ ແຕ່ອີງຕາມຜົນກວດຕົວຢ່າງນ້ຳຢູ່ໜອງທານ ຊ້ຳພັດພົບວ່າມີສານໄຊຍາໄນ 0.25 ມິນລິກຼາມ ຕໍ່ນ້ຳໜຶ່ງລິດ. ໄຊຍາໄນ ເປັນສານພິດທີ່ອັນຕະລາຍທີ່ສຸດ ສາມາດຂ້າສິ່ງທີ່ມີຊີວິດໄດ້ໄວທີ່ສຸດ. ແຕ່ທາງການ ແກ້ໄຂພຽງແຕ່ເອົາຕົວຢ່າງນ້ຳໄປກວດ ແລ້ວຫ້າມບໍ່ໃຫ້ປະຊາຊົນລົງຫາປາເທົ່ານັ້ນ. ເອົາຕົວຢ່າງນ້ຳໄປກວດພຽງແຕ່ຄັ້ງດຽວເທົ່ານັ້ນ ໂດຍບໍ່ມີການກວດກາຫລາຍຄັ້ງຢ່າງຕໍ່ເນື່ອງ.

## 5. ການຊົດເຊີຍ ແລະ ມາດຕະການແກ້ໄຂຂອງໂຮງງານ.

ໃນວັນທີ 29 ພຶດສະພາ 2009, ຄະນະຮັບຜິດຊອບແກ້ໄຂສະພາບການດັ່ງກ່າວໄດ້ຈັດກອງປະຊຸມດ່ວນຂຶ້ນທີ່ໂຮງງານດັ່ງກ່າວ ໂດຍມີຄະນະຄວບຄຸມຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ເຈົ້າໜ້າທີ່ພະແນກສາທາລະນະສຸກນະຄອນຫລວງ, ພະແນກອຸດສາຫະກຳ-ການຄ້າ, ຫ້ອງວ່າການນະຄອນຫລວງ, ອຳນາດການປົກຄອງທ້ອງຖິ່ນເມືອງປາກງື່ມ ແລະ ເຈົ້າຂອງໂຮງງານດັ່ງກ່າວ, ເພື່ອແລກປ່ຽນຂໍ້ຄິດເຫັນ ແລະ ຊອກຫາວິທີການແກ້ໄຂສະພາບເປັນພິດຂອງນ້ຳໃຫ້ຫລຸດລົງ.

ບໍລິສັດໄດ້ອອກມາຍອມຮັບຄວາມບົກຜ່ອງຂອງຕົນ ແລ້ວດູດເອົານ້ຳເປື້ອນຢູ່ຫ້ວຍກອຍ ອອກ ເຊິ່ງເປັນຈຸດເສື່ອມຕໍ່ຈາກໂຮງງານລົງໄປໃສ່ໜອງທານ. ນອກຈາກນັ້ນໂຮງງານກໍໄດ້ລະບາຍນ້ຳອອກຈາກໜອງໃຫ້ນ້ຳໄຫລສະດວກ ແລະ ຕິດຕາມສະພາບການຢ່າງໃກ້ຊິດ.

ສຳລັບປາຕາຍຈຳນວນ 2 ໂຕນນັ້ນ, ເຈົ້າຂອງໂຮງງານໄດ້ຈ່າຍຄ່າເສຍຫາຍ ກິໂລລະ10.000 ກີບ ຄິດເປັນມູນຄ່າທັງໝົດປະມານ 20 ລ້ານກີບ.

ໂຮງງານໄດ້ສ້າງບໍ່ບຳບັດນ້ຳເສຍ 11 ບໍ່, ເພື່ອຮອງຮັບນ້ຳເສຍທີ່ໂຮງງານຈະປ່ອຍອອກມາ. ນອກຈາກນີ້ ໂຮງງານຈະຊື້ປາມາປ່ອຍໃສ່ໜອງເປັນເວລາ 3 ປີຕິດຕໍ່ກັນ, ເພື່ອທົດແທນປາທີ່ຕາຍໄປເນື່ອງຈາກການປ່ອຍນ້ຳປົນເປື້ອນສານພິດລົງໜອງ.


ຂ. ຜົ້ງສາລີ
ຂ. ຫຼວງນ້ຳທາ
ຂ. ອຸດົມໄຊ
ຂ. ບໍ່ແກ້ວ
ຂ .ຫົວພັນ
ຂ. ຫຼວງພະບາງ
ຂ. ຊຽງຂວາງ
ຂ. ໄຊຍະບູລີ
ຂ. ວຽງຈັນ
ຂ. ບໍລິຄຳໄຊ
ນະຄອນຫ ວງວຽງຈັນ
ຂ. ຄຳມ່ວນ
ຂ. ສະຫວັນນະເຂດ
ພື້ນທີ່ກໍລະນີສຶກສາ
ເມືອງປາກງື່ມ, ນະຄອນຫລວງວຽງຈັນ
ຂ. ສາລະວັນ
ຂ. ເຊກອງ
ຂ. ຈຳປາສັກ
ຂ. ອັດຕະປື
ໜອງທານ
ບ. ນາທາມ

## 6. ການວິເຄາະບັນຫາ ແລະ ສິ່ງທີ່ອາດຈະເກີດຂຶ້ນ.

ປາຕາຍເປັນພຽງຜົນຂອງສິ່ງທີ່ເກີດຂຶ້ນເທົ່ານັ້ນ. ແຕ່ເມື່ອຖ້າເບິ່ງໄປໃນແງ່ເລິກໆແລ້ວ, ຕ້ອງມາເບິ່ງກັນທີ່ຕົ້ນຕໍຂອງບັນຫາ.

- ໂຮງງານບໍ່ມີບໍ່ບຳບັດນ້ຳເສຍພຽງພໍຈຶ່ງເຮັດໃຫ້ນ້ຳເສຍລົ້ນອອກມາ. ຄຳຖາມກໍຄືວ່າຖ້າອີງຕາມກົດໝາຍສິ່ງແວດລ້ອມເປັນຫຍັງໜ່ວຍງານທີ່ກ່ຽວຂ້ອງຈຶ່ງອະນຸມັດໃຫ້ໂຮງງານນີ້ເປີດດຳເນີນການຜະລິດ. ອັນນີ້ສະແດງວ່າ ປະສິດທິພາບການເຮັດວຽກຂອງໜ່ວຍງານດ້ານສິ່ງແວດລ້ອມຍັງມີຂໍ້ຈຳກັດຫລາຍໃນການຕິດຕາມກວດກາ.

- ໜ່ວຍງານສິ່ງແວດລ້ອມບໍ່ສາມາດສ້າງຄວາມໝັ້ນໃຈໃຫ້ແກ່ປະຊາຊົນໄດ້ໃນການກວດວິເຄາະນ້ຳເພາະວ່ານັບຕັ້ງແຕ່ປາຕາຍມີການເອົາຕົວຢ່າງນ້ຳໄປກວດພຽງແຕ່ໜຶ່ງຄັ້ງເທົ່ານັ້ນ ແລະ ບໍ່ມີການເອົາຕົວຢ່າງນ້ຳໄປກວດຄັ້ງທີສອງ ຫລື ຫລາຍກວ່ານັ້ນ, ເພື່ອປຽບທຽບຄວາມເຂັ້ມຂອງສານໄຊຍາໄນວ່າ ມັນເພີ່ມຂຶ້ນ ຫລື ຫລຸດລົງ. ສະນັ້ນ, ຈຶ່ງບໍ່ສາມາດຊີ້ແຈງໃຫ້ປະຊາຊົນຮູ້ວ່າ ເມື່ອໃດເຂົາເຈົ້າຈະສາມາດລົງຫາປາໃນໜອງໄດ້. ຫລັງຈາກທາງການສັ່ງຫ້າມແລ້ວ ຈະເກີດຫຍັງຂຶ້ນໃນໄລຍະຍາວຕໍ່ສຸຂະ ພາບຂອງຊຸມຊົນ, ເພາະວ່າໜ່ວຍງານສິ່ງແວດລ້ອມບໍ່ສາມາດຢືນຢັນໄດ້ວ່າ ນ້ຳໃນໜອງນັ້ນຍັງມີສານໄຊຍາໄນຕົກຄ້າງຢູ່ໃນອັດຕາສ່ວນເທົ່າໃດເຊິ່ງໃນຈຸດນີ້ທາງການບໍ່ສາມາດຢັ້ງຢືນໄດ້.

- ການທີ່ປະຊາຊົນບໍ່ສາມາດລົງຫາປາໄດ້ຍ່ອມສົ່ງຜົນກະທົບຕໍ່ເສດຖະກິດຂອງເຂົາເຈົ້າເພາະວ່າປະຊາຊົນສ່ວນໃຫຍ່ຢູ່ເຂດດັ່ງກ່າວອາໄສການຫາປາມາກິນ ແລະ ຂາຍອີງຕາມການບອກເລົ່າຂອງປະຊາຊົນເວົ້າວ່າ ຄອບຄົວໜຶ່ງຫາໄດ້ປະມານ 3 ກິໂລກຼາມຕໍ່ມື້. ແຕ່ຖ້າບໍ່ໄດ້ຫາປາ 10 ມື້ ໃນໄລຍະທີ່ນ້ຳເປັນພິດ ແລະ ທາງການສັ່ງຫ້າມບໍ່ໃຫ້ຫານັ້ນ, ສະແດງວ່າ ຄອບຄົວນັ້ນຕ້ອງຂາດປາກິນໄປ 30 ກິໂລກຼາມ. ເມື່ອຄິດເປັນເງິນປາທຳມະຊາດ 1 ກິໂລກຼາມ ມີລາຄາ ປະມານ 40.000 ກີບ. ໝາຍຄວາມວ່າ ພາຍໃນ 10 ວັນ ຄອບຄົວໜຶ່ງຈະເສຍລາຍຮັບໄປ 400.000 ກີບ.

- ການໃຊ້ມາດຕະການກົດໝາຍຕໍ່ຜູ້ລະເມີດຍັງມີການປະນີປະນອມກັນຄືການທີ່ໂຮງງານປ່ອຍນ້ຳເສຍລົງໃສ່ແລ້ວບໍ່ມີການປັບໄໝໃສ່ໂທດຕາມລະບຽບກົດໝາຍ. ຍ່ອມຈະເປັນຕົວຢ່າງອັນໜຶ່ງໃຫ້ແກ່ ໂຮງງານອື່ນໃນການກະທຳຄວາມຜິດ, ເພາະວ່າ ໂຮງງານອື່ນຈະມີຂໍ້ອ້າງວ່າໂຮງງານນີ້ປ່ອຍນ້ຳເສຍລົງແມ່ນ້ຳຍັງບໍ່ຖືກດຳເນີນຄະດີມັນກໍຈະເປັນມາດຖານໃຫ້ໂຮງງານອື່ນລະເມີດຕໍ່ໄປ. ເພາະວ່າ ເຖິງ ຈະລະເມີດທາງໜ່ວຍງານທີ່ກ່ຽວຂ້ອງກໍບໍ່ດຳເນີນຄະດີ. ແລ້ວໃນຕໍ່ໜ້າກໍຈະມີອີກຫລາຍໂຮງງານ ແລະ ຫລາຍບຸກຄົນພະຍາຍາມລະເມີດລະບຽບກົດໝາຍ.

## 7. ສະຫລຸບ.

- ບັນຫາປາຕາຍທີ່ເກີດຂື້ນຢູ່ ໜອງຫານ ເກີດຈາກການລະເມີດລະບຽບການຂອງໂຮງງານ, ສ້າງຄວາມເສຍຫາຍໃຫ້ແກ່ປະຊາຊົນບໍ່ວ່າ ຈະເປັນໃນແງ່ເສດຖະກິດ ແລະ ໃນແງ່ສຸຂະພາບ.
- ໜ່ວຍງານທີ່ກ່ຽວຂ້ອງ ໂດຍສະເພາະໜ່ວຍງານດ້ານສິ່ງແວດລ້ອມຍັງບໍ່ມີການດຳເນີນການຕາມລະບຽບກົດໝາຍຕໍ່ຜູ້ລະເມີດ.
- ປະຊາຊົນຕ້ອງໄດ້ລົງຫາປາເອງ ໂດຍບໍ່ມີການຍັ້ງຢືນຈາກໜ່ວຍງານດ້ານສິ່ງແວດລ້ອມ. ລະບຽບກົດໝາຍຕໍ່ຜູ້ລະເມີດ.
- ປະຊາຊົນຕ້ອງໄດ້ລົງຫາປາເອງ ໂດຍບໍ່ມີການຍັ້ງຢືນຈາກໜ່ວຍງານດ້ານສິ່ງແວດລ້ອມ.

## 8. ຂໍ້ສະເໜີ:

- ຄວນໃຫ້ພະນັກງານທີ່ເຮັດວຽກດ້ານສິ່ງແວດລ້ອມໄປເອົາຕົວຢ່າງນ້ຳມາກວດໃຫ້ທັນເວລາ. ການເຮັດວຽກບໍ່ຄວນອີງໃສ່ທຶນສະໜັບສະໜູນຈາກໂຮງງານ, ແຕ່ຈະຕ້ອງເຮັດວຽກດ້ວຍຄວາມເປັນນັກວິຊາການ ແລະ ອິດສະຫລະ.
- ອີງຕາມກົດໝາຍແລ້ວ, ປະຊາຊົນທີ່ໄດ້ຮັບຜົນກະທົບສາມາດຟ້ອງຮ້ອງຄ່າເສຍຫາຍໃນທາງແພ່ງໄດ້ ແຕ່ວ່າ ບໍ່ມີໃຜຟ້ອງຮ້ອງ ເນື່ອງຈາກວ່າເຂົາເຈົ້າບໍ່ມີຄວາມຮູ້ທາງດ້ານກົດໝາຍ ແລະ ຂາດທີ່ປຶກສາທາງດ້ານກົດໝາຍ ສະນັ້ນ, ຄວນມີການເຜີຍແຜ່ຄວາມຮູ້ທາງດ້ານກົດໝາຍໃຫ້ປະຊາຊົນຢ່າງເປີດກວ້າງ.
- ໜ່ວຍງານດ້ານສິ່ງແວດລ້ອມຄວນຈະເຂັ້ມງວດໃນການກວດກາລະບົບບຳບັດນ້ຳເສຍຂອງໂຮງງານຕ່າງໆ. ໂຮງງານໃດບໍ່ໄດ້ມາດຕະຖານຈະຕ້ອງບໍ່ອະນຸຍາດໃຫ້ເປີດດຳເນີນການ ແລະ ຈະຕ້ອງປະຕິບັດລະບຽບກົດໝາຍຕໍ່ໂຮງງານທີ່ກະທຳຜິດກົດໝາຍຢ່າງເຄັ່ງຄັດ.

# 9. ແຫລ່ງຂໍ້ມູນອ້າງອີງ.


- ໜັງສືພິມວຽງຈັນໃໝ່ ສະບັບວັນທີ 22/5/2009.
- ໜັງສືພິມວຽງຈັນທາມສ໌ ລົງພິມໃນເດືອນພຶດສະພາ ແລະ ມິຖຸນາ.
- ໜັງສືພິມລາວພັດທະນາສະບັບວັນທີ 1 ເດືອນ 6 ປີ 2009, ສະບັບວັນທີ 3 ເດືອນ 6 ປີ 2009, ສະບັບວັນທີ 16 ເດືອນ 6 ປີ 2009, ສະບັບວັນທີ 30 ເດືອນ 6 ປີ 2009, ສະບັບວັນທີ 3 ເດືອນ 7 ປີ 2009.
- ທ່ານ ພິມມະສອນ ນາຍບ້ານ ນາທາມ ເມືອງປາກງື່ມ.

Rights-LINK

# ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ

## *ເປົ້າໝາຍຂອງໂຄງການ*

ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງ ໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.

## *ຈຸດປະສົງຂອງໂຄງການ*

ເພື່ອສົ່ງເສີມທຸກພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມຮັບຮູ້, ຄວາມສາມາດ ແລະ ມີສ່ວນຮ່ວມໃນການປຶກສາ ຫາລືກ່ຽວກັບຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ ເພື່ອໃຫ້ປະຊາຊົນໃນທ້ອງຖິ່ນສາມາດເຂົ້າໃຈໄດ້ ກ່ຽວກັບສິດໃນການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

## *ໂຄງການດຳເນີນງານໂດຍອີງຕາມຫຼັກການດັ່ງຕໍ່ລົງໄປນີ້*

- ຄວາມເປັນເຈົ້າການຂອງຄົນລາວ
- ການຍອມຮັບຂໍ້ຕົກລົງວ່າດ້ວຍບົດບາດຍິງ-ຊາຍ ກ່ຽວກັບປະເດັນທີ່ດິນ
- ການຍອມຮັບຂໍ້ຕົກລົງວ່າດ້ວຍຄວາມເປັນຊົນຊາດຊົນເຜົ່າ ແລະ ປະເພນີ ວັດທະນະທຳທ້ອງຖິ່ນ
- ຄວາມເປັນກາງ
- ການເຂົ້າເຖິງຂໍ້ມູນຂ່າວສານຢ່າງເປີດກວ້າງ
- ເຮັດໃຫ້ມີຄວາມຫຼາກຫຼາຍ
- ການມີສ່ວນຮ່ວມ

ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ
ຊັບພະຍາກອນທຳມະຊາດ
ອົງການບ້ານຈຸດສຸມສາກົນ
ຕູ້ ປ.ນ. 4697
ນະຄອນຫຼວງວຽງຈັນ, ສປປ ລາວ
+856 (0)21 312519

ອີເມວ: info@rightslinklao.org
www.rightslinklao.org